# "ທຄຕລ" ຮ່ວມມືກັບ "Swift Pass" ໃຫ້ການບໍລິການຮັບຊຳລະເງິນ ດ້ວຍ WeChat Pay ແລະ AliPay ເປີດໂອກາດໃຫ້ຮ້ານຄ້າລາວຮັບລູກຄ້າຄືນຈີນເພີ່ມຂຶ້ນ!

ໃນຕອນບ່າຍຂອງວັນສຸກ ວັນທີ 11 ຕຸລາ 2019, ໄດ້ມີພິທີເປີດໂຕການບໍລິການຮັບຊຳລະ WeChat Pay ແລະ AliPay ຢ່າງເປັນທາງການ ຢູ່ທີ່ ໂຮງແຮມລາວພຣາຊາ ນະຄອນຫຼວງວຽງຈັນ ໃຫ້ກຽດເປີດພິທີໃນຄັ້ງນີ້ໂດຍ ທ່ານ ພູຂົງ ຈັນທະຈັກ ຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຕຕລ) ແລະ ທ່ານ Jacky Chiang ຜູ້ອຳນວຍການດ້ານການພັດທະນາຍຸດທະສາດ, Swift Pass. ເປັນກຽດເຂົ້າຮ່ວມໂດຍ ທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ທ່ານ ຄຳສຸກ ສູນດາລາ ຮອງປະທານສະພາບໍລິຫານ ທຄຕລ ແລະ ທ່ານ ປອ ພູເພັດ ກ້ຽວພິລາວົງ ກຳມະການສະພາບໍລິຫານ ທຄຕລ ແລະ ທ່ານ ສຸລິສັກ ທຳນຸວົງ ວ່າການຫົວໜ້າກົມຄຸ້ມຄອງລະບົບຊຳລະສະສາງ ທະນາຄານແຫ່ງ ສປປ ລາວ ແລະ ທ່ານ Chew Ann Wee ຫົວຫນ້າຝ່າຍຂາຍ ແລະ ການຕະຫລາດ NTT Data ພ້ອມດ້ວຍບັນດາຄະນະກົມ, ຄະນະພະແນກທີ່ກ່ຽວຂ້ອງຈາກທະນາຄານແຫ່ງ ສປປ ລາວ, ບັນດາລູກຄ້າຂອງ ທຄຕລ, ບໍລິສັດໃນເຄືອ ທຄຕລ, ຄະນະອຳນວຍການ, ຄະນະພະແນກ, ສູນ ແລະ ສາຂາ ຕະຫຼອດຮອດພະນັກງານຂອງ ທຄຕລ ພາຍໃນນະຄອນຫຼວງວຽງຈັນ ພ້ອມດ້ວຍສື່ມວນຊົນຈາກຫຼາຍພາກສ່ວນກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.




***ຮູບພາບ1: ພາບບັນຍາກາດພິທີເປີດໂຕການບໍລິການຮັບຊຳລະ WeChat Pay ແລະ AliPay ຢ່າງເປັນທາງການ ໃນວັນທີ 11/10/2019 ທີ່ໂຮງແຮມລາວພຣາຊາ.***

ໃນຍຸກແຫ່ງການພັດທະນາທີ່ເຕັກໂນໂລຢີມີຄວາມກ້າວໜ້າສູງທີ່ທະນາຄານຍຸກໃໝ່ຂັບເຄື່ອນດ້ວຍເທັກໂນໂລຢີດີຈີຕໍ້ ແລະ ທຄຕລ ຍັງຄົງມຸ້ງໝັ້ນໃນການເປັນຜູ້ນຳທາງດ້ານເທັກໂນໂລຢີການເງິນເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າຫຼາຍທີ່ສຸດ. ເຊິ່ງ ທຄຕລ ໄດ້ມີການພັດທະນາຢ່າງຕໍ່ເນື່ອງ ແລະ ເຕີບໃຫຍ່ຂະຫຍາຍຕົວໃນຫຼາຍໆຜະລິດຕະພັນ ໂດຍສະເພາະແມ່ນການບໍລິການຊຳລະສະສາງຄ່າສິນຄ້າຜ່ານ **QR Code** ກັບສາກົນ ເຊິ່ງໃນຄັ້ງນີ້ ທຄຕລ ໄດ້ກ້າວໄປອີກຂັ້ນທາງດ້ານການຮັບຊຳລະສະສາງດ້ວຍ **QR Code** ໂດຍການຮ່ວມມືລະຫວ່າງ **ທຄຕລ** ກັບ **Swift Pass** ແລະ **NTT DATA** ເພື່ອຊ່ວຍເປີດຊ່ອງທາງການຊຳລະສະສາງໃຫ້ຫຼາຍຂຶ້ນ. ເຊິ່ງຈະເຮັດໃຫ້ສະມາຊິກຮ້ານຄ້າຂອງ ທຄຕລ

ສາມາດຮັບຊຳລະສະສາງດ້ວຍ **WeChat Pay** ແລະ **AliPay** ນັ້ນໝາຍຄວາມວ່າ: ລູກຄ້ານັກທ່ອງທ່ຽວຈີນ ແລະ ຜູ້ໃຊ້ແອັບ **WeChat Pay** ແລະ **AliPay** ສາມາດຊຳລະສິນຄ້າ ແລະ ບໍລິການທີ່ປະເທດລາວໄດ້ຢ່າງສະດວກປອດໄພ ແລະ ຍັງເປັນການເພີ່ມຍອດຂາຍໃຫ້ແກ່ຮ້ານຄ້າໃນລາວອີກດ້ວຍ.

ຖືເປັນຄັ້ງທຳອິດໃນລາວທີ່ຮ້ານຄ້າສາມາດຮັບການຊຳລະດ້ວຍ **WeChat Pay** ເຊິ່ງເປັນການຮັບຊຳລະດ້ວຍ **QR Code** ທີ່ລວມເອົາທັງ **WeChat Pay** ແລະ **AliPay** ໄວ້ໃນ **QR Code** ດຽວກັນ ແລະ ຍັງເປັນຄັ້ງທຳອິດໃນລາວທີ່ຮ້ານຄ້າ **E-Commerce** ຈະມີ **QR Code** ໄວ້ຮອງຮັບການຊຳລະສະສາງດ້ວຍ **Wecha pay** ແລະ **AliPay** ອີກດ້ວຍ.

ດ້ວຍຕົວເລກຜູ້ຊົມໃຊ້ **WeChat Pay** ແລະ **AliPay** ຕ່າງກໍ່ມີຜູ້ຊົມໃຊ້ຫຼາຍກວ່າ 900 ລ້ານຢູເຊີ້ ສະແດງໃຫ້ເຫັນວ່າເປັນແອັບລະບົບການຊຳລະສະສາງຍອດນິຍົມໃນຈີນ ແລະ ເປັນແອັບທີ່ຄົນຈີນໃຊ້ສ່ວນຫຼາຍໃນຊີວິດປະຈຳວັນ. ນັກທ່ອງທ່ຽວພ້ອມດ້ວຍນັກທຸລະກິດຈີນທີ່ເດີນທາງມາໃນປະເທດລາວມີຄວາມເພິ່ງພໍໃຈ ຕ້ອງການທີ່ຈະໃຊ້ແອັບ **WeChat Pay** ແລະ **AliPay** ເຊັ່ນດຽວກັນ. ການທີ່ ທຄຕລ ເປີດໃຫ້ບໍລິການຊຳລະສະສາງດ້ວຍ **WeChat Pay** ແລະ **AliPay** ນີ້ຈະຊ່ວຍໃຫ້ຮ້ານຄ້າທີ່ເປັນສະມາຊິກຂອງ **ທຄຕລ** ເປີດໂອກາດຂະຫຍາຍຄວາມອາດສາມາດໃນການຮັບຊຳລະສະສາງທີ່ສອດຄ່ອງກັບຄວາມຕ້ອງການຂອງຄົນຈີນໄດ້ເປັນຢ່າງດີ. ເຊິ່ງເປັນຜົນປະໂຫຍດຕໍ່ຫົວໜ່ວຍທຸລະກິດໃຫ້ດີຍິ່ງຂຶ້ນເນື່ອງຈາກຈະສະດວກສະບາຍເຮັດໃຫ້ລູກຄ້າຄົນຈີນຮູ້ສຶກເໝືອນໃຊ້ຈ່າຍພາຍໃນປະເທດຂອງຕົນຊ່ວຍກະຕຸ້ນການໃຊ້ຈ່າຍຂອງຄົນຈີນໃນລາວ ເຊິ່ງເປັນກຸ່ມນັກທ່ອງທ່ຽວຫຼັກໆອີກປະເທດໜຶ່ງ.

ຕໍ່ກັບໂອກາດດັ່ງກ່າວ **ທຄຕລ** ມີຖານຮ້ານຄ້າສະມາຊິກຮັບຊຳລະສະສາງດ້ວຍ **QR Code** Function **OnePay** ແອັບ **BCEL One** ຈຳນວນຫລາຍກວ່າ **10.000** ຮ້ານຄ້າ ທີ່ພ້ອມຈະຮອງຮັບການບໍລິການຮັບຊຳລະສະສາງດ້ວຍ **WeChat Pay** ແລະ **AliPay** ແລະ ຍັງສືບຕໍ່ຂະຫຍາຍຮ່ວມມືກັບຄູ່ຮ່ວມທຸລະກິດ ແລະ ຮ້ານຄ້າສະມາຊິກເພື່ອຂະຫຍາຍຕາໜ່າງການຮອງ **WeChat Pay** ແລະ **AliPay** ໃຫ້ກວ້າງຂຶ້ນໃນຂົງເຂດທົ່ວປະເທດ.

ໃນຍຸກແຫ່ງການພັດທະນາທີ່ເທັກໂນໂລຢີມີຄວາມກ້າວໜ້າສູງ ແລະ ເພື່ອການຫັນເປັນດີຈີຕ້ໍຂອງອຸດສະຫະກຳການຊຳລະສະສາງຂອງລາວ, ທຄຕລ ຈະສືບຕໍ່ພັດທະນາຜະລິດຕະພັນ ແລະ ການບໍລິການຢ່າງບໍ່ຢຸດຢັ້ງ ໂດຍທຸກຜະລິດຕະພັນ ແລະ ການບໍລິການ ຂອງ ທຄຕລ ແມ່ນເນັ້ນຄວາມທັນສະໄໝ, ສະດວກສະບາຍ, ມີຄວາມປອດໄພ ກວດສອບໄດ້ ແລະ ໄດ້ມາດຕະຖານສາກົນ ເພື່ອນຳສະເໜີບໍລິການທາງການເງິນທີ່ຫຼາກຫຼາຍທັນສະໄໝ ຕອບສະໜອງຄວາມຕ້ອງການລູກຄ້າ ບົນພື້ນຖານຄວາມຮັບຜິດຊອບສູງຕໍ່ສັງຄົມ, ເພື່ອໃຫ້ລູກຄ້າ ແລະ ສັງຄົມໄດ້ຮັບປະໂຫຍດສູງສຸດ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ວ່ອງໄວ ໝັ້ນໃຈ
Call center: **1555**, Facebook: BCEL Bank, Website: www.bcel.com.la

